ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 05 /ລບ
ນະຄອນຫຼວງວຽງຈັນ, ວັນທີ 12 ມັງກອນ 2023

# ດຳລັດ
# ວ່າດ້ວຍກອງທຶນສົ່ງເສີມ
# ຈຸລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍວ່າດ້ວຍການສົ່ງເສີມຈຸລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ສະບັບເລກທີ 16/ສພຊ, ລົງວັນທີ 07 ກໍລະກົດ 2022;
- ອີງຕາມ ໜັງສືສະເໜີຂອງ ກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 1596/ອຄ, ລົງວັນທີ 09 ພະຈິກ 2022.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດຫຼັກການ ແລະ ລະບຽບການ ກ່ຽວກັບການຈັດຕັ້ງ, ການຄຸ້ມຄອງ, ການນຳໃຊ້ ແລະ ການກວດກາກອງທຶນສົ່ງເສີມຈຸລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ເພື່ອສະໜອງທຶນ ໃຫ້ແກ່ນະໂຍບາຍສົ່ງເສີມຈຸລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃຫ້ມີຄວາມເຂັ້ມແຂງ ແລະ ເຕີບໃຫຍ່ຂະຫຍາຍຕົວ ແນໃສ່ເພີ່ມທະວີການຜະລິດສິນຄ້າ, ການຄ້າ ແລະ ການບໍລິການ, ການຂະຫຍາຍຖານລາຍຮັບ, ສ້າງປະຖົມປັດໄຈ ໃຫ້ການຫັນເປັນອຸດສາຫະກຳ ແລະ ທັນສະໄໝ ເທື່ອລະກ້າວ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດແຫ່ງຊາດ ແລະ ການລຶບລ້າງຄວາມທຸກຍາກ.

### ມາດຕາ 2 ກອງທຶນສົ່ງເສີມຈຸລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ

ກອງທຶນສົ່ງເສີມຈຸລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ຂຽນຫຍໍ້ວ່າ "ທສວ" ເປັນພາສາອັງກິດວ່າ Micro, Small and Medium Enterprise Promotion Fund, ຂຽນຫຍໍ້ວ່າ "MSME Fund" ແມ່ນ ກອງທຶນທີ່ສ້າງຕັ້ງຂຶ້ນ ເພື່ອລະດົມ ແລະ ສະສົມທຶນຈາກແຫຼ່ງທຶນຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ ແນໃສ່ໃຫ້ມີທຶນພຽງພໍ, ໝູນວຽນນຳໃຊ້ເຂົ້າໃນການສົ່ງເສີມຈຸລະວິສາຫະກິດ, ວິສາຫະກິດ

ຂະໜາດນ້ອຍ ແລະ ກາງ ຢ່າງກວ້າງຂວາງ, ຕໍ່ເນື່ອງ, ຍືນຍົງ ແລະ ມີປະສິດທິຜົນ ໂດຍຢູ່ພາຍໃຕ້ການຄຸ້ມຄອງ ແລະ ກວດກາຂອງກະຊວງອຸດສາຫະກຳ ແລະ ການຄ້າ ແລະ ກະຊວງການເງິນ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ** ໝາຍເຖິງ ຫົວໜ່ວຍທຸລະກິດ ທີ່ໄດ້ຮັບການສ້າງຕັ້ງ ແລະ ເຄື່ອນໄຫວຢ່າງຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ໂດຍກຳນົດຂະໜາດ ຕາມຈຳນວນແຮງງານສະເລ່ຍໃນປີ, ມູນຄ່າຊັບສິນທັງໝົດ ແລະ ລວມຍອດລາຍຮັບທຸລະກິດປະຈຳປີຂອງແຕ່ລະຂະແໜງວິສາຫະກິດ ຊຶ່ງລັດຖະບານ ເປັນຜູ້ກຳນົດ ໃນແຕ່ລະໄລຍະ. ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ຂຽນຫຍໍ້ວ່າ "ຈນກ";

2. **ທຸລະກິດສະຕາດອັບ (Start-up)** ໝາຍເຖິງ ວິສາຫະກິດ ຫຼື ໂຄງການທຸລະກິດແບບໃໝ່ ດ້ວຍການ ນຳໃຊ້ເຕັກໂນໂລຊີ ແລະ ນະວັດຕະກຳດ້ານຕ່າງໆ ຊຶ່ງມີຮູບແບບທຸລະກິດ ທີ່ຮອງຮັບການຂະຫຍາຍຕົວໃນຈັງຫວະທີ່ໄວໄດ້;

3. **ນະວັດຕະກຳໃໝ່ (Innovation)** ໝາຍເຖິງ ການປະດິດສ້າງ, ການພັດທະນາ ແລະ ການນຳສະເໜີຜະລິດຕະພັນ, ຂະບວນການ ຫຼື ການບໍລິການແນວໃໝ່ ເພື່ອເພີ່ມປະສິດທິພາບ, ປະສິດທິຜົນ ແລະ ຄວາມສາມາດໃນການແຂ່ງຂັນ.

**ມາດຕາ 4 ນະໂຍບາຍຂອງລັດ ກ່ຽວກັບ ທສວ**

ລັດ ປະກອບທຶນເບື້ອງຕົ້ນ ໃນການສ້າງຕັ້ງ ທສວ ແລະ ສະໜອງທຶນ ຕາມຄວາມສາມາດຕົວຈິງ ໃນແຕ່ລະໄລຍະ ເພື່ອຮັບປະກັນການຈັດຕັ້ງປະຕິບັດນະໂຍບາຍສົ່ງເສີມ ຈນກ ຂອງລັດຖະບານ ໃຫ້ປະກົດຜົນເປັນຈິງ.

ລັດ ນຳໃຊ້ ທສວ ເປັນເຄື່ອງມືໃນການດັດສົມການສະໜອງສິນເຊື່ອ ຈນກ ຕາມນະໂຍບາຍຂອງລັດຖະບານ ໃນແຕ່ລະໄລຍະ ແຕ່ບໍ່ແມ່ນປ່ຽນແທນການສະໜອງສິນເຊື່ອ ທີ່ທະນາຄານທຸລະກິດ ຫຼື ສະຖາບັນການເງິນອື່ນ ດຳເນີນຢູ່.

ລັດ ສ້າງເງື່ອນໄຂ ໃຫ້ ທສວ ເຄື່ອນໄຫວວຽກງານ ຢ່າງເປັນເຈົ້າຕົນເອງ, ມີປະສິດທິພາບ ແລະ ປະສິດທິຜົນ ໂດຍໃຫ້ບັນດາຂະແໜງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ອຳນວຍຄວາມສະດວກ ແລະ ໃຫ້ການຮ່ວມມືກັບການເຄື່ອນໄຫວຂອງ ທສວ ພ້ອມທັງຄົ້ນຄວ້າ ສະເໜີສະພາແຫ່ງຊາດ ພິຈາລະນາປັບປຸງບາງມາດຕາຂອງກົດໝາຍ ທີ່ເປັນອຸປະສັກຕໍ່ການເຄື່ອນໄຫວວຽກງານ ທສວ.

ລັດ ອຳນວຍຄວາມສະດວກ ໃຫ້ ທສວ ເພື່ອລະດົມທຶນຈາກແຫຼ່ງຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ.

**ມາດຕາ 5 ຫຼັກການການເຄື່ອນໄຫວຂອງ ທສວ**

ທສວ ເຄື່ອນໄຫວວຽກງານ ຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບລັດຖະທຳມະນູນ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນພັດທະນາ ຈນກ;
2. ມີຄວາມເປັນເຈົ້າຕົນເອງ ທາງດ້ານການເງິນ ແລະ ການເຄື່ອນໄຫວວຽກງານ;
3. ຮັບປະກັນການເຄື່ອນໄຫວ ຢ່າງມີປະສິດທິພາບ, ປະສິດທິຜົນ ແລະ ມີຄວາມຍືນຍົງ;
4. ຮັບປະກັນຄວາມໂປ່ງໃສ ແລະ ຄວາມຍຸຕິທຳ ໃນການນຳໃຊ້ທຶນຂອງ ທສວ;
5. ຮັບປະກັນ ໃຫ້ມີການນຳພາ-ຊີ້ນຳ, ຕິດຕາມ, ກວດກາ ແລະ ປະເມີນຜົນ ຢ່າງເປັນປົກກະຕິ.

## ໝວດທີ 2
## ແຫຼ່ງທຶນ ແລະ ການນຳໃຊ້ທຶນຂອງ ທສວ

**ມາດຕາ 6 ແຫຼ່ງທຶນຂອງ ທສວ**

ທສວ ໄດ້ທຶນມາຈາກແຫຼ່ງຕ່າງໆ ດັ່ງນີ້:

1. ການປະກອບທຶນຂອງລັດຖະບານ ໃນແຕ່ລະໄລຍະ;
2. ການຊ່ວຍເຫຼືອລ້າ;
3. ການກູ້ຢືມຈາກພາຍໃນ ຫຼື ຕ່າງປະເທດ;
4. ການປະກອບສ່ວນຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ດ້ວຍຄວາມສະໝັກໃຈ;
5. ລາຍຮັບຈາກການບໍລິຫານ ທສວ;
6. ແຫຼ່ງທຶນອື່ນ ທີ່ບໍ່ຂັດກັບກົດໝາຍ.

**ມາດຕາ 7 ເປົ້າໝາຍການນຳໃຊ້ທຶນຂອງ ທສວ**

ທຶນຂອງ ທສວ ຈະນຳໃຊ້ໃນ ສອງ ເປົ້າໝາຍ ດັ່ງນີ້:

1. ສະໜອງສິນເຊື່ອ ໃຫ້ ຈນກ ໃນບັນດາຂະແໜງ ຫຼື ຂົງເຂດບູລິມະສິດ ຕາມນະໂຍບາຍຂອງລັດຖະບານ ໃນແຕ່ລະໄລຍະ;

2. ສະໜອງທຶນໃຫ້ບັນດາໂຄງການວິຊາການ ຕາມນະໂຍບາຍສົ່ງເສີມ ຈນກ ຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ.

ທຶນທີ່ໄດ້ຮັບຈາກການປະກອບທຶນຂອງລັດຖະບານ ຕາມທີ່ກຳນົດໄວ້ໃນຂໍ້ 1 ມາດຕາ 6 ຂອງດຳລັດສະບັບນີ້ ໃຫ້ນຳໃຊ້ເຂົ້າໃນເປົ້າໝາຍ ຕາມທີ່ກຳນົດໄວ້ໃນຂໍ້ 1 ຂອງມາດຕານີ້ ຈຳນວນ ເກົ້າສິບເອັດສ່ວນຮ້ອຍ ຂຶ້ນໄປ, ນຳໃຊ້ສຳລັບໂຄງການວິຊາການ ບໍ່ເກີນ ແປດສ່ວນຮ້ອຍ ແລະ ນຳໃຊ້ສຳລັບການບໍລິຫານກອງທຶນ ບໍ່ເກີນ ໜຶ່ງສ່ວນຮ້ອຍ. ໃນກໍລະນີລັດຖະບານ ບໍ່ປະກອບທຶນ ໃຫ້ ທສວ ຢ່າງຕໍ່ເນື່ອງ ໃນແຕ່ລະປີ ລັດຖະບານ ຈະພິຈາລະນາ ສະໜອງທຶນສຳລັບໂຄງການວິຊາການ ແລະ ການບໍລິຫານ ທສວ ຕາມຄວາມເໝາະສົມ.

ທຶນທີ່ໄດ້ຮັບຈາກແຫຼ່ງອື່ນ ທີ່ບໍ່ແມ່ນການປະກອບທຶນຂອງລັດຖະບານ ໃຫ້ປະຕິບັດຕາມເງື່ອນໄຂຂອງຜູ້ໃຫ້ທຶນ ແລະ ການພິຈາລະນາຂອງສະພາບໍລິຫານ ທສວ.

## ໝວດທີ 3
## ການສະໜອງສິນເຊື່ອ

**ມາດຕາ 8 ການສະໜອງສິນເຊື່ອ**

ທສວ ສາມາດສະໜອງສິນເຊື່ອ ໃຫ້ ຈນກ ເພື່ອເປັນເຄື່ອງມືດັດສົມການສະໜອງສິນເຊື່ອ ແລະ ສ້າງເງື່ອນໄຂໃຫ້ ຈນກ ສາມາດເຂົ້າເຖິງແຫຼ່ງທຶນໄດ້ຫຼາຍຂຶ້ນ ໂດຍມີດອກເບ້ຍ ແລະ ໄລຍະການກູ້ຢືມ ທີ່ເໝາະສົມ ຕາມນະໂຍບາຍຂອງລັດຖະບານ ໃນຮູບແບບ ດັ່ງນີ້:

1. ຜ່ານທະນາຄານທຸລະກິດ ຫຼື ສະຖາບັນການເງິນອື່ນ ເພື່ອເປັນທຶນໃນການເຄື່ອນໄຫວທຸລະກິດຂອງ ຈນກ;

2. ການຊ່ວຍຟື້ນຟູ ຈນກ ທີ່ບໍ່ມີສະພາບຄ່ອງທາງການເງິນ ແຕ່ມີຄວາມສາມາດໃນການຜະລິດ ແລະ ມີຕະຫຼາດຮອງຮັບ ທີ່ໝັ້ນຄົງ;

3. ການລົງທຶນຮ່ວມກັບ ຈນກ ທີ່ມີແຜນທຸລະກິດທີ່ດີ, ມີທ່າແຮງໃນການຂະຫຍາຍທຸລະກິດ ແຕ່ບໍ່ສາມາດເຂົ້າເຖິງແຫຼ່ງທຶນໄດ້ ຍ້ອນຂາດຫຼັກຊັບຄ້ຳປະກັນ;

4. ການປະກອບທຶນ ໃຫ້ກອງທຶນອື່ນ ທີ່ມີເງື່ອນໄຂ ເພື່ອສະໜອງສິນເຊື່ອ ໃຫ້ ຈນກ ເປັນຕົ້ນ ຜູ້ປະກອບກິດຈະການໃໝ່, ທຸລະກິດແບບສະຕາດອັບ, ການສົ່ງເສີມນະວັດຕະກຳ;

5. ຮູບແບບອື່ນ ທີ່ເຫັນວ່າມີປະສິດທິຜົນ.

ສຳລັບທຶນທີ່ລັດຖະບານປະກອບໃຫ້ ຕາມທີ່ກຳນົດໄວ້ໃນຂໍ້ 1 ມາດຕາ 6 ຂອງດຳລັດສະບັບນີ້ ໃຫ້ນຳໃຊ້ສະໜອງສິນເຊື່ອ ໃນຮູບແບບທີ 1 ເທົ່ານັ້ນ.

ສຳລັບທຶນທີ່ໄດ້ຮັບຈາກແຫຼ່ງທຶນອື່ນ ສາມາດນຳໃຊ້ສະໜອງສິນເຊື່ອໃນທຸກຮູບແບບ ໂດຍສອດຄ່ອງກັບເງື່ອນໄຂຂອງຜູ້ໃຫ້ທຶນ ແລະ ຕາມການຕົກລົງຂອງສະພາບໍລິຫານ ທສວ.

ການສະໜອງສິນເຊື່ອ ຕາມຮູບແບບ ທີ່ກຳນົດໃນຂໍ້ 2, 3, 4 ແລະ 5 ຂອງມາດຕານີ້ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 9 ຂະແໜງ ແລະ ຂົງເຂດບູລິມະສິດທີ່ໄດ້ຮັບການສົ່ງເສີມ**

ຈນກ ທີ່ຈະໄດ້ຮັບບູລິມະສິດໃນການສະໜອງສິນເຊື່ອ ບ້ວງການປະກອບທຶນຂອງລັດຖະບານ ມີຂະແໜງ ດັ່ງນີ້:

1. ຂະແໜງການຜະລິດສິນຄ້າ ມີ:

- ອຸດສາຫະກຳປຸງແຕ່ງຜະລິດຕະພັນກະສິກຳ;
- ຫັດຖະກຳ;
- ປູກຝັງ ແລະ ລ້ຽງສັດ.

2. ຂະແໜງການຄ້າ ທີ່ດຳເນີນການ ກ່ຽວກັບການເກັບຊື້ຜົນຜະລິດກະສິກຳ ເພື່ອສະໜອງໂຮງງານ ແລະ ສົ່ງອອກຕ່າງປະເທດ;

3. ຂະແໜງການບໍລິການ ທີ່ດຳເນີນການ ກ່ຽວກັບການບໍລິການດ້ານການທ່ອງທ່ຽວ.

ກະຊວງອຸດສາຫະກຳ ແລະ ການຄ້າ ຄົ້ນຄວ້າ ແລະ ປັບປຸງຂະແໜງບູລິມະສິດ ໃນແຕ່ລະໄລຍະ ຕາມການເຫັນດີຂອງລັດຖະບານ.

ຂົງເຂດບູລິມະສິດ ປະກອບມີ ເຂດຫ່າງໄກສອກຫຼີກ ແລະ ເຂດທຸກຍາກ ຕາມການກຳນົດຂອງລັດຖະບານ ໃນແຕ່ລະໄລຍະ.

**ມາດຕາ 10 ການກຳນົດຈຳນວນເງິນກູ້ສູງສຸດ ແລະ ໄລຍະເວລາກູ້ຢືມ**

ຈຳນວນເງິນກູ້ທີ່ສະໜອງ ໃຫ້ ຈນກ ສູງສຸດ ບໍ່ເກີນ ເຈັດສິບສ່ວນຮ້ອຍ ຂອງມູນຄ່າຊັບສິນທັງໝົດຂອງວິສາຫະກິດທີ່ກູ້ຢືມ. ໄລຍະເວລາກູ້ຢືມສູງສຸດ ບໍ່ເກີນ ສິບປີ ສຳລັບທຶນຄົງທີ່ ແລະ ບໍ່ເກີນ ຫ້າປີ ສຳລັບທຶນໝູນວຽນ.

ຈນກ ທີ່ລົງທຶນຢູ່ໃນຂົງເຂດບູລິມະສິດຂອງລັດຖະບານ ຈະໄດ້ຮັບການພິຈາລະນາຈຳນວນທຶນ ສູງສຸດ ເຈັດສິບສ່ວນຮ້ອຍ ຂຶ້ນໄປ, ແຕ່ບໍ່ເກີນ ຮ້ອຍສ່ວນຮ້ອຍ ຂອງມູນຄ່າຊັບສິນທັງໝົດຂອງວິສາຫະກິດທີ່ກູ້ຢືມ ໂດຍມອບໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ພິຈາລະນາຕົກລົງ ຕາມການສະເໜີຂອງສະພາບໍລິຫານ ທສວ.

**ມາດຕາ 11 ດອກເບ້ຍສຳລັບທະນາຄານທຸລະກິດ ແລະ ສະຖາບັນການເງິນອື່ນ**

ດອກເບ້ຍສຳລັບທະນາຄານທຸລະກິດ ແລະ ສະຖາບັນການເງິນອື່ນ ແມ່ນ ດອກເບ້ຍ ທີ່ ທສວ ເກັບຈາກການສະໜອງທຶນ ໃຫ້ທະນາຄານທຸລະກິດ ຫຼື ສະຖາບັນການເງິນອື່ນ ເພື່ອເປັນສິນເຊື່ອ ໃຫ້ ຈນກ.

ດອກເບ້ຍສຳລັບທະນາຄານທຸລະກິດ ແລະ ສະຖາບັນການເງິນອື່ນ ໃຫ້ປະຕິບັດ ດັ່ງນີ້:

1. ການສະໜອງສິນເຊື່ອ ທີ່ໄດ້ຮັບຈາກການປະກອບທຶນຂອງລັດຖະບານ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1 ມາດຕາ 6 ຂອງດຳລັດສະບັບນີ້ ບໍ່ໃຫ້ເກັບດອກເບ້ຍ;

2. ການສະໜອງສິນເຊື່ອ ທີ່ໄດ້ຮັບຈາກແຫຼ່ງອື່ນ ທີ່ບໍ່ແມ່ນການປະກອບທຶນຂອງລັດຖະບານ ໃຫ້ປະຕິບັດຕາມເງື່ອນໄຂຂອງຜູ້ໃຫ້ທຶນ ຫຼື ຕາມການພິຈາລະນາຂອງສະພາບໍລິຫານ ທສວ.

**ມາດຕາ 12 ດອກເບ້ຍສຳລັບ ຈນກ**

ດອກເບ້ຍສຳລັບ ຈນກ ແມ່ນ ດອກເບ້ຍ ທີ່ທະນາຄານທຸລະກິດ ຫຼື ສະຖາບັນການເງິນອື່ນ ເກັບຈາກການສະໜອງສິນເຊື່ອ ໃຫ້ ຈນກ.

ດອກເບ້ຍສຳລັບ ຈນກ ໃຫ້ປະຕິບັດ ດັ່ງນີ້:

1. ການສະໜອງສິນເຊື່ອ ທີ່ໄດ້ຮັບຈາກການປະກອບທຶນຂອງລັດຖະບານ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1 ມາດຕາ 6 ຂອງດຳລັດສະບັບນີ້ ໃຫ້ເກັບດອກເບ້ຍ ໃນອັດຕາສູງສຸດ ບໍ່ເກີນ ສາມສ່ວນຮ້ອຍ ຕໍ່ປີ;

2. ການສະໜອງສິນເຊື່ອ ຜ່ານທະນາຄານທຸລະກິດ ທີ່ນຳໃຊ້ທຶນຈາກແຫຼ່ງອື່ນ ຊຶ່ງບໍ່ແມ່ນການປະກອບທຶນຂອງລັດຖະບານ ໃຫ້ເກັບດອກເບ້ຍ ໃນອັດຕາທີ່ຕ່ຳກວ່າ ອັດຕາດອກເບ້ຍເງິນກູ້ ໂດຍສະເລ່ຍຂອງຫ້າ ທະນາຄານທຸລະກິດ ຢ່າງໜ້ອຍ ສາມສິບສ່ວນຮ້ອຍ ຫຼື ປະຕິບັດຕາມເງື່ອນໄຂຂອງຜູ້ໃຫ້ທຶນ ແລະ ດອກເບ້ຍຕົ້ນທຶນ ໂດຍກຳນົດອັດຕາດອກເບ້ຍສ່ວນຕ່າງ ບໍ່ເກີນ ສາມສ່ວນຮ້ອຍ ຈາກອັດຕາດອກເບ້ຍຕົ້ນທຶນ ທີ່ໄດ້ຮັບມາ. ສຳລັບການສະໜອງສິນເຊື່ອ ຜ່ານສະຖາບັນການເງິນຈຸລະພາກ ໃຫ້ເກັບດອກເບ້ຍ ຕາມການພິຈາລະນາຂອງສະພາບໍລິຫານ ທສວ.

**ມາດຕາ 13 ເງື່ອນໄຂຂອງທະນາຄານທຸລະກິດ ຫຼື ສະຖາບັນການເງິນອື່ນ ທີ່ຈະໄດ້ທຶນ**

ໃນການກຳນົດເງື່ອນໄຂຂອງທະນາຄານທຸລະກິດ ຫຼື ສະຖາບັນການເງິນອື່ນ ທີ່ຈະໄດ້ຮັບທຶນຈາກ ທສວ ໃຫ້ອີງໃສ່ປັດໄຈ ດັ່ງນີ້:

1. ການປະຕິບັດລະບຽບການວ່າດ້ວຍຄວາມໝັ້ນຄົງຂອງ ທະນາຄານ ແຫ່ງ ສປປ ລາວ;
2. ຜົນການດຳເນີນທຸລະກິດ;
3. ປະສົບການໃນການປ່ອຍກູ້ ໃຫ້ແກ່ ຈນກ;
4. ຈຳນວນສາຂາ;

ສະພາບໍລິຫານ ທສວ ເປັນຜູ້ກຳນົດລະອຽດ ເງື່ອນໄຂແຕ່ລະປັດໄຈ.

**ມາດຕາ 14 ເງື່ອນໄຂຂອງ ຈນກ ທີ່ຈະໄດ້ຮັບສິນເຊື່ອ**

ເງື່ອນໄຂການພິຈາລະນາຄັດເລືອກ ຈນກ ໃນການສະໜອງສິນເຊື່ອຂອງ ທສວ ຕາມທີ່ກຳນົດໄວ້ໃນຂໍ້ 1 ມາດຕາ 8 ຂອງດຳລັດສະບັບນີ້ ໃຫ້ປະຕິບັດ ດັ່ງນີ້:

1. ສຳລັບທຶນທີ່ລັດຖະບານປະກອບໃຫ້ ຕ້ອງປະຕິບັດຕາມເງື່ອນໄຂ ດັ່ງນີ້:

- ມີແຜນການດຳເນີນທຸລະກິດ ທີ່ຈະແຈ້ງ ແລະ ຊັດເຈນ;
- ໄດ້ຮັບການຝຶກອົບຮົມ, ສ້າງຄວາມເຂັ້ມແຂງ ຈາກຂະແໜງການອຸດສາຫະກຳ ແລະ ການຄ້າ ຫຼື ພາກສ່ວນອື່ນ ໂດຍໄດ້ຮັບການຢັ້ງຢືນຢ່າງເປັນທາງການຈາກຂະແໜງການອຸດສາຫະກຳ ແລະ ການຄ້າ;
- ເປັນວິສາຫະກິດທີ່ຖືບັນຊີ ຕາມກົດໝາຍວ່າດ້ວຍການບັນຊີ ແລະ ລະບຽບການທີ່ກ່ຽວຂ້ອງ;
- ບໍ່ເປັນໜີ້ບໍ່ເກີດດອກອອກຜົນ ຢູ່ທະນາຄານທຸລະກິດ ຫຼື ສະຖາບັນການເງິນໃດໜຶ່ງ;
- ເປັນຂະແໜງ ຫຼື ຂົງເຂດບູລິມະສິດ ທີ່ລັດຖະບານ ກຳນົດ ໃນແຕ່ລະໄລຍະ ແລະ ເປັນໂຄງການທີ່ມີຜົນຕອບແທນດ້ານທຸລະກິດ ເພື່ອຮັບປະກັນ ໃຫ້ ທສວ ມີຄວາມຍືນຍົງ;

- ວິສາຫະກິດ ທີ່ບໍ່ໄດ້ຮັບນະໂຍບາຍສົ່ງເສີມດ້ານສິນເຊື່ອອື່ນຂອງລັດຖະບານ ໃນເວລາດຽວກັນ.

2. ສຳລັບທຶນຈາກແຫຼ່ງອື່ນ ຕ້ອງປະຕິບັດຕາມເງື່ອນໄຂຂອງຜູ້ໃຫ້ທຶນ ຫຼື ຕາມການພິຈາລະນາຂອງສະພາບໍລິຫານ ທສວ.

## ໝວດທີ 4
## ການສະໜອງທຶນໃຫ້ໂຄງການວິຊາການ

### ມາດຕາ 15 ການສະໜອງທຶນໃຫ້ໂຄງການວິຊາການ

ທສວ ສະໜອງທຶນໃຫ້ໂຄງການວິຊາການ ເພື່ອຈັດຕັ້ງປະຕິບັດກິດຈະກຳຕ່າງໆ ເຊັ່ນ ການຝຶກອົບຮົມ, ການປະຊຸມສຳມະນາດ້ານວິຊາການ, ການຈັດຈ້າງຜູ້ຊ່ຽວຊານດ້ານຕ່າງໆ, ການປັບປຸງ ຫຼື ຍົກລະດັບເຕັກໂນໂລຊີ, ການພັດທະນາຜະລິດຕະພັນ, ການອອກແບບ ແລະ ການຫຸ້ມຫໍ່ສິນຄ້າ, ການປັບປຸງມາດຕະຖານຄຸນນະພາບ, ການວາງສະແດງ, ການທັດສະນະສຶກສາແລກປ່ຽນບົດຮຽນຂອງຜູ້ປະກອບກິດຈະການ, ການປັບປຸງທຸລະກິດດ້ານອື່ນໆ.

ໂຄງການວິຊາການ ທີ່ຈະໄດ້ຮັບການສະໜອງທຶນ ຕ້ອງສອດຄ່ອງກັບກິດຈະການ ຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ, ແຜນພັດທະນາ ຈນກ ຂອງລັດຖະບານ, ແຂວງ ແລະ ນະຄອນຫຼວງ ວາງອອກ ໃນແຕ່ລະໄລຍະ.

ສຳລັບລະບຽບການສະໜອງທຶນ ໃຫ້ໂຄງການວິຊາການ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ ໂດຍມອບໃຫ້ສະພາບໍລິຫານ ທສວ ເປັນຜູ້ພິຈາລະນາຮັບຮອງ.

### ມາດຕາ 16 ເງື່ອນໄຂການພິຈາລະນາສະໜອງທຶນໃຫ້ໂຄງການວິຊາການ

ໂຄງການທີ່ຈະໄດ້ຮັບການພິຈາລະນາສະໜອງທຶນຈາກ ທສວ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເປັນໂຄງການ ທີ່ສອດຄ່ອງກັບນະໂຍບາຍສົ່ງເສີມ ຈນກ ຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ;

2. ເປັນໂຄງການ ທີ່ສະເໜີໂດຍ:

- ໜ່ວຍງານຂອງລັດ ທີ່ມີບົດບາດສົ່ງເສີມ ຈນກ;
- ສະພາການຄ້າ ແລະ ອຸດສາຫະກຳ, ສູນບໍລິການ ຈນກ, ສະມາຄົມ, ກຸ່ມທຸລະກິດ, ທະນາຄານທຸລະກິດ ແລະ ສະຖາບັນການເງິນອື່ນ;
- ຫົວໜ່ວຍ ຈນກ.

## ໝວດທີ 5
## ການເງິນ ແລະ ການບັນຊີ

### ມາດຕາ 17 ລາຍຮັບຂອງ ທສວ

ລາຍຮັບຈາກການບໍລິຫານ ທສວ ມີ ດັ່ງນີ້:

1. ດອກເບ້ຍ ແລະ ລາຍຮັບ ຈາກການສະໜອງສິນເຊື່ອ;
2. ລາຍຮັບອື່ນ ຈາກການເຄື່ອນໄຫວຂອງ ທສວ ທີ່ຖືກຕ້ອງຕາມກົດໝາຍ.

ລາຍຮັບຈາກການບໍລິຫານຂອງ ທສວ ແມ່ນຮັບເຂົ້າບັນຊີສະເພາະຂອງ ທສວ ຢູ່ຄັງເງິນແຫ່ງຊາດ.

**ມາດຕາ 18 ລາຍຈ່າຍຂອງ ທສວ**

ລາຍຈ່າຍ ຂອງ ທສວ ມີ ດັ່ງນີ້:

1. ການສະໜອງສິນເຊື່ອ ໃຫ້ ຈນກ ຕາມທີ່ກໍານົດໄວ້ໃນມາດຕາ 8 ຂອງດໍາລັດສະບັບນີ້;
2. ການສະໜອງທຶນໃຫ້ໂຄງການວິຊາການ ຕາມທີ່ກໍານົດໃນມາດຕາ 15 ຂອງດໍາລັດສະບັບນີ້;
3. ການຊໍາລະຕົ້ນທຶນ, ດອກເບ້ຍເງິນກູ້ ແລະ ລາຍຈ່າຍອື່ນ ຕາມສັນຍາ;
4. ການໃຊ້ຈ່າຍບໍລິຫານ ສໍາລັບການເຄື່ອນໄຫວວຽກງານຂອງ ທສວ ແລະ ຄະນະກໍາມະການສົ່ງເສີມ ຈນກ ຂັ້ນສູນກາງ ປະກອບມີ:

- ເງິນເດືອນພະນັກງານ ຕາມສັນຍາ ແລະ ຄ່າຈ້າງຊ່ຽວຊານສະເພາະໃດໜຶ່ງ ຂອງ ທສວ ໃນກໍລະນີຈໍາເປັນ;
- ບໍາລຸງ, ກໍ່ສ້າງພະນັກງານ ຂອງ ທສວ;
- ການເຄື່ອນໄຫວວຽກງານປະຈໍາປີ ຂອງສະພາບໍລິຫານ ທສວ, ຄະນະກໍາມະການກວດກາພາຍໃນ, ຄະນະກໍາມະການສົ່ງເສີມ ຈນກ ຂັ້ນສູນກາງ ແລະ ພະນັກງານ ທສວ ລວມທັງເງິນເບ້ຍປະຊຸມ, ເງິນນະໂຍບາຍ;
- ຈັດຊື້ ແລະ ບໍາລຸງຮັກສາ ຊັບສິນບັດຄົງທີ່ ຂອງ ທສວ;
- ການໃຊ້ຈ່າຍບໍລິຫານອື່ນ ຂອງ ທສວ.

ສະພາບໍລິຫານ ທສວ ຄົ້ນຄວ້າກໍານົດລະບຽບການສະເພາະ ສໍາລັບການຄຸ້ມຄອງລາຍຈ່າຍ ຂອງ ທສວ ໃຫ້ລະອຽດ, ຮັດກຸມ, ຮັບປະກັນໃຫ້ນໍາໃຊ້ຖືກຕ້ອງ ຕາມເປົ້າໝາຍ ແລະ ມີຄວາມໂປ່ງໃສ.

**ມາດຕາ 19 ການຄຸ້ມຄອງລາຍຮັບ-ລາຍຈ່າຍ ຂອງ ທສວ**

ທຸກລາຍຮັບ-ລາຍຈ່າຍ ຂອງ ທສວ ຕ້ອງຢູ່ພາຍໃຕ້ການຄຸ້ມຄອງ ແລະ ຕິດຕາມ ກວດກາຂອງກະຊວງອຸດສາຫະກໍາ ແລະ ການຄ້າ ແລະ ກະຊວງການເງິນ ຢ່າງເຂັ້ມງວດ ແລະ ມີຄະນະກໍາມະການກວດກາພາຍໃນ ຕິດຕາມ, ກວດກາ ຢ່າງເປັນປົກກະຕິ.

ທຸກລາຍຮັບ-ລາຍຈ່າຍ ຂອງ ທສວ ຕ້ອງນອນໃນແຜນງົບປະມານແຫ່ງລັດປະຈໍາປີ, ຈັດຕັ້ງປະຕິບັດຜ່ານລະບົບຄັງເງິນແຫ່ງຊາດ ແລະ ທະນາຄານທຸລະກິດ ທີ່ໄດ້ຮັບອະນຸຍາດຈາກລັດຖະບານ.

ທສວ ຕ້ອງສະຫຼຸບລາຍຮັບ-ລາຍຈ່າຍ ປະຈໍາເດືອນ, ສາມເດືອນ, ຫົກເດືອນ, ເກົ້າເດືອນ ແລະ ປະຈໍາປີ ເພື່ອລາຍງານ ໃຫ້ສະພາບໍລິຫານ ທສວ.

**ມາດຕາ 20 ການເບີກຈ່າຍທຶນ ຂອງ ທສວ**

ການເບີກຈ່າຍທຶນ ທສວ ໃຫ້ປະຕິບັດ ດັ່ງນີ້:

1. ລັດຖະມົນຕີກະຊວງອຸດສາຫະກໍາ ແລະ ການຄ້າ ເປັນຜູ້ອະນຸມັດເບີກຈ່າຍຈາກບັນຊີ ຂອງ ທສວ ທີ່ເປີດຢູ່ຄັງເງິນແຫ່ງຊາດ ເພື່ອໂອນໄປບັນຊີສະເພາະ ຂອງ ທສວ ທີ່ເປີດຢູ່ທະນາຄານທຸລະກິດ;
2. ຜູ້ອໍານວຍການ ທສວ ເປັນຜູ້ສັ່ງຈ່າຍຈາກບັນຊີ ຢູ່ທະນາຄານທຸລະກິດ ສໍາລັບການຈັດຕັ້ງປະຕິບັດໃນແຕ່ລະກິດຈະກໍາ ຕາມການຕົກລົງເຫັນດີຂອງສະພາບໍລິຫານ ທສວ;

ການຄິດໄລ່ການເບີກຈ່າຍຕ່າງໆ ໃຫ້ປະຕິບັດຕາມລະບຽບການສະເພາະ ຂອງ ທສວ ໂດຍສອດຄ່ອງກັບນະໂຍບາຍຂອງລັດ, ເງື່ອນໄຂຂອງຜູ້ໃຫ້ທຶນກູ້ຢືມ ແລະ ລະບຽບການ ຄຸ້ມຄອງການເງິນ ແລະ ງົບປະມານແຫ່ງລັດ.

**ມາດຕາ 21 ການບັນຊີ ແລະ ປີງົບປະມານ**

ທສວ ປະຕິບັດລະບົບບັນຊີ, ສາລະບານງົບປະມານ ແລະ ປື້ມຄູ່ມື ກ່ຽວກັບການບໍລິຫານການເງິນ-ການບັນຊີສະເພາະ ຕາມເງື່ອນໄຂ ມາດຕະຖານ ແລະ ຜັງບັນຊີ ທີ່ກະຊວງການເງິນ ປະກາດໃຊ້ ໃນແຕ່ລະໄລຍະ ເພື່ອຄຸ້ມຄອງລາຍຮັບ-ລາຍຈ່າຍ.

ລາຍຮັບ-ລາຍຈ່າຍງົບປະມານທັງໝົດ ຂອງ ທສວ ໃຫ້ເປີດບັນຊີຢູ່ຄັງເງິນແຫ່ງຊາດ ແລະ ທະນາຄານທຸລະກິດໃດໜຶ່ງ ຕາມການເຫັນດີຂອງລັດຖະບານ.

ປີງົບປະມານ, ການສະຫຼຸບ ແລະ ລາຍງານ ຂອງ ທສວ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍງົບປະມານແຫ່ງລັດ ແລະ ກົດໝາຍວ່າດ້ວຍການບັນຊີ.

**ມາດຕາ 22 ແຜນງົບປະມານການເຄື່ອນໄຫວປະຈຳປີ ຂອງ ທສວ**

ການສ້າງແຜນງົບປະມານການເຄື່ອນໄຫວປະຈຳປີຂອງຕົນ ໂດຍສອດຄ່ອງກັບກົດໝາຍວ່າດ້ວຍງົບປະມານແຫ່ງລັດ. ການສ້າງແຜນງົບປະມານປະຈຳປີ ຂອງ ທສວ ແມ່ນ ສະພາບໍລິຫານ ທສວ ຄົ້ນຄວ້າກຳນົດແຜນແລ້ວ ສະເໜີລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອດຳເນີນຕາມຫຼັກການ ແລະ ຂັ້ນຕອນຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍງົບປະມານແຫ່ງລັດ.

ໃນການສະຫຼຸບປີງົບປະມານ ຕ້ອງຍົກຍອດເງິນທີ່ຍັງເຫຼືອ ໃນ ທສວ ເຂົ້າເປັນລາຍຮັບ ຂອງ ທສວ ໃນປີຖັດໄປ.

## ໝວດທີ 6
## ການຄຸ້ມຄອງບໍລິຫານ ທສວ

**ມາດຕາ 23 ໂຄງປະກອບການຈັດຕັ້ງ ຂອງ ທສວ**

ໂຄງປະກອບການຈັດຕັ້ງ ຂອງ ທສວ ປະກອບດ້ວຍ:

1. ສະພາບໍລິຫານ ທສວ;
2. ຄະນະກຳມະການກວດກາພາຍໃນ;
3. ກອງເລຂາ ທສວ.

**ມາດຕາ 24 ສະພາບໍລິຫານ ທສວ**

ສະພາບໍລິຫານເປັນອົງການບໍລິຫານສູງສຸດ ຂອງ ທສວ, ເປັນອົງການທີ່ບໍ່ປະຈຳການ ມີພາລະບົດບາດໃນການນຳພາ-ຊີ້ນຳ ແລະ ຕິດຕາມ ກວດກາການຄຸ້ມຄອງບໍລິຫານ ທສວ ໃຫ້ສອດຄ່ອງກັບລັດຖະທຳມະນູນ, ກົດໝາຍ ແລະ ແຜນພັດທະນາ ຈນກ.

**ມາດຕາ 25 ໂຄງປະກອບບຸກຄະລາກອນຂອງສະພາບໍລິຫານ ທສວ**

ໂຄງປະກອບບຸກຄະລາກອນຂອງສະພາບໍລິຫານ ທສວ ປະກອບດ້ວຍ:

1. ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ — ເປັນປະທານ;
2. ຮອງລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ — ເປັນຮອງປະທານ ແລະ ເປັນຜູ້ປະຈຳການ;
3. ຫົວໜ້າກົມ, ກະຊວງການເງິນ — ເປັນຄະນະ ແລະ

4. ຫົວໜ້າກົມ, ທະນາຄານ ແຫ່ງ ສປປ ລາວ — ເປັນປະທານກວດກາພາຍໃນ; ເປັນຄະນະ ແລະ ເປັນຮອງປະທານກວດກາພາຍໃນ;
5. ຫົວໜ້າກົມ, ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ — ເປັນຄະນະ;
6. ຫົວໜ້າກົມ, ກະຊວງກະສິກໍາ ແລະ ປ່າໄມ້ — ເປັນຄະນະ;
7. ຫົວໜ້າກົມ, ກະຊວງຖະແຫຼງຂ່າວ, ວັດທະນາທໍາ ແລະ ທ່ອງທ່ຽວ — ເປັນຄະນະ;
8. ຮອງປະທານ ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ — ເປັນຄະນະ ແລະ ເປັນກໍາມະການຄະນະກວດກາພາຍໃນ;
9. ຜູ້ອໍານວຍການ ທສວ — ເປັນຄະນະ ທັງເປັນຫົວໜ້າກອງເລຂາ ທສວ.

**ມາດຕາ 26 ການແຕ່ງຕັ້ງ, ປົດຕໍາແໜ່ງຂອງສະມາຊິກສະພາບໍລິຫານ ທສວ**

ສະມາຊິກສະພາບໍລິຫານ ທສວ ຖືກແຕ່ງຕັ້ງ ຫຼື ປົດຕໍາແໜ່ງ ໂດຍນາຍົກລັດຖະມົນຕີ ຕາມການສະເໜີຂອງລັດຖະມົນຕີກະຊວງອຸດສາຫະກໍາ ແລະ ການຄ້າ ໂດຍການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ.

**ມາດຕາ 27 ສິດ ແລະ ໜ້າທີ່ຂອງສະພາບໍລິຫານ ທສວ**

ສະພາບໍລິຫານ ທສວ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ກໍານົດນະໂຍບາຍ, ລະບຽບການ ໃນການຄຸ້ມຄອງ ແລະ ການເຄື່ອນໄຫວວຽກງານ ຂອງ ທສວ;
2. ກໍານົດອັດຕາສ່ວນການນໍາໃຊ້ທຶນ ເຂົ້າໃນແຕ່ລະເປົ້າໝາຍ ຕາມທີ່ກໍານົດໄວ້ໃນມາດຕາ 8 ຂອງດໍາລັດສະບັບນີ້;
3. ກໍານົດອັດຕາດອກເບ້ຍເງິນກູ້ ຜ່ານທະນາຄານທຸລະກິດ, ສະຖາບັນການເງິນອື່ນ;
4. ກໍານົດເງື່ອນໄຂຂອງທະນາຄານທຸລະກິດ ຫຼື ສະຖາບັນການເງິນອື່ນ ທີ່ຈະໄດ້ຮັບທຶນ ຂອງ ທສວ;
5. ຮັບຮອງລະບຽບການ ສະໜອງທຶນໃຫ້ໂຄງການວິຊາການ;
6. ຮັບຮອງບົດລາຍງານ ແລະ ແຜນງົບປະມານການເຄື່ອນໄຫວປະຈໍາປີ, ຜົນການກວດສອບປະຈໍາປີ, ແຜນລາຍຮັບ ແລະ ລາຍຈ່າຍ ແລະ ມາດຕະການຈັດຕັ້ງປະຕິບັດແຜນດັ່ງກ່າວ;
7. ພິຈາລະນາຮັບຮອງເອົາ ການສະເໜີແຕ່ງຕັ້ງ ຫຼື ປົດຕໍາແໜ່ງ ຮອງຜູ້ອໍານວຍການ ທສວ ຕາມການສະເໜີຂອງຜູ້ອໍານວຍການ ທສວ;
8. ກໍານົດຂອບເຂດສິດຂອງຜູ້ອໍານວຍການ ທສວ ໃນການນໍາໃຊ້ທຶນ ຂອງ ທສວ ເຂົ້າໃນແຕ່ລະເປົ້າໝາຍ;
9. ຊີ້ນໍາ, ຊຸກຍູ້ ແລະ ຕິດຕາມ ກວດກາການເຄື່ອນໄຫວຂອງກອງເລຂາ ທສວ;
10. ຕິດຕາມ ກວດກາ ແລະ ປະເມີນຜົນການນໍາໃຊ້ທຶນ ຂອງ ທສວ;
11. ລະດົມທຶນຈາກພາຍໃນ ແລະ ຕ່າງປະເທດ;
12. ຮັບຜິດຊອບຕໍ່ຜົນສໍາເລັດ ແລະ ຂໍ້ບົກຜ່ອງ ໃນການຄຸ້ມຄອງບໍລິຫານ ທສວ;
13. ຈັດສັນງົບປະມານໃຫ້ພຽງພໍ ເພື່ອຊໍາລະຕົ້ນທຶນ, ດອກເບ້ຍເງິນກູ້ ແລະ ລາຍຈ່າຍອື່ນ ໃຫ້ຄົບຖ້ວນ ແລະ ຖືກຕ້ອງ ຕາມກໍານົດເວລາ ທີ່ໄດ້ກໍານົດໄວ້ໃນສັນຍາກູ້ຢືມ;

14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ, ລະບຽບການ ຫຼື ຕາມການມອບໝາຍ.

ສະມາຊິກສະພາບໍລິຫານ ທສວ ບໍ່ໄດ້ຮັບເງິນເດືອນຈາກ ທສວ, ແຕ່ຈະໄດ້ຮັບເບ້ຍປະຊຸມ ແລະ ເງິນນະໂຍບາຍ ຕາມລະບຽບການ.

**ມາດຕາ 28 ກອງປະຊຸມສະພາບໍລິຫານ ທສວ**

ສະພາບໍລິຫານ ທສວ ເຄື່ອນໄຫວວຽກງານຕາມລະບອບປະຊຸມ ຊຶ່ງຈັດຂຶ້ນ ສີ່ຄັ້ງ ຕໍ່ປີ. ໃນກໍລະນີຈຳເປັນ ແລະ ຮີບດ່ວນ ສາມາດເປີດກອງປະຊຸມສະໄໝວິສາມັນ ໄດ້ທຸກເວລາ ຕາມການຮຽກປະຊຸມຂອງປະທານສະພາບໍລິຫານ ຫຼື ຕາມການສະເໜີຂອງສະມາຊິກສະພາບໍລິຫານ ແຕ່ສາມຄົນ ຂຶ້ນໄປ.

ກອງປະຊຸມສະພາບໍລິຫານ ທສວ ຈະເປີດຂຶ້ນໄດ້ກໍຕໍ່ເມື່ອ ມີສະມາຊິກສະພາບໍລິຫານ ເຂົ້າຮ່ວມ ຢ່າງໜ້ອຍ ສອງສ່ວນສາມ ຂອງຈຳນວນສະມາຊິກທັງໝົດ. ມະຕິຂອງກອງປະຊຸມສະພາບໍລິຫານ ຈະມີຜົນບັງຄັບໃຊ້ກໍຕໍ່ເມື່ອ ໄດ້ຮັບຄະແນນສຽງສ່ວນຫຼາຍຂອງສະມາຊິກສະພາບໍລິຫານ ທີ່ເຂົ້າຮ່ວມກອງປະຊຸມ.

**ມາດຕາ 29 ຄະນະກຳມະການກວດກາພາຍໃນ**

ຄະນະກຳມະການກວດກາພາຍໃນ ເປັນຄະນະທີ່ບໍ່ປະຈຳການ ປະກອບມີ ສາມ ທ່ານ, ປະທານ ໜຶ່ງ ທ່ານ, ຮອງປະທານ ໜຶ່ງ ທ່ານ ແລະ ກຳມະການ ໜຶ່ງ ທ່ານ.

ຮອງຜູ້ອຳນວຍການ ທສວ ຜູ້ຮັບຜິດຊອບວຽກງານກວດກາພາຍໃນ ຂອງ ທສວ ເຮັດໜ້າທີ່ເປັນກອງເລຂາ ໃຫ້ຄະນະກຳມະການກວດກາພາຍໃນຂອງສະພາບໍລິຫານ ທສວ.

**ມາດຕາ 30 ສິດ ແລະ ໜ້າທີ່ຂອງຄະນະກຳມະການກວດກາພາຍໃນ**

ຄະນະກຳມະການກວດກາພາຍໃນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ກວດກາການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ;
2. ກວດກາຄວາມຖືກຕ້ອງຂອງເອກະສານລາຍງານການເງິນ;
3. ກວດກາປະສິດທິຜົນຂອງການດຳເນີນງານ;
4. ກວດກາການຈັດຕັ້ງປະຕິບັດໜ້າທີ່ວຽກງານກວດກາຂອງໜ່ວຍງານກວດກາພາຍໃນ ຂອງ ທສວ;
5. ເຂົ້າຮ່ວມ ແລະ ລາຍງານຜົນການກວດກາ ໃຫ້ກອງປະຊຸມສະພາບໍລິຫານ ທສວ;
6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງສະພາບໍລິຫານ ທສວ.

**ມາດຕາ 31 ໂຄງປະກອບບຸກຄະລາກອນ ຂອງກອງເລຂາ ທສວ**

ໂຄງປະກອບບຸກຄະລາກອນ ຂອງກອງເລຂາ ທສວ ປະກອບມີ ຜູ້ອຳນວຍການ ແລະ ຮອງຜູ້ອຳນວຍການ ທສວ ຈຳນວນໜຶ່ງ, ຫົວໜ້າພະແນກ, ຮອງຫົວໜ້າພະແນກ ຈຳນວນໜຶ່ງ, ພະນັກງານວິຊາການ, ພະນັກງານຕາມສັນຍາ ແລະ ຊ່ຽວຊານສະເພາະດ້ານ.

ຜູ້ອຳນວຍການ ທສວ ມີຕຳແໜ່ງເທົ່າຫົວໜ້າກົມ ໂດຍແມ່ນຫົວໜ້າສຳນັກງານສົ່ງເສີມ ຈນກ ເປັນຜູ້ອຳນວຍການໂດຍຕຳແໜ່ງ, ຮອງຜູ້ອຳນວຍການ ມີຕຳແໜ່ງເທົ່າຮອງຫົວໜ້າກົມ.

**ມາດຕາ 32 ການແຕ່ງຕັ້ງບຸກຄະລາກອນຂອງກອງເລຂາ ທສວ**

ຜູ້ອຳນວຍການ ທສວ ແມ່ນຖືກແຕ່ງຕັ້ງໂດຍຕຳແໜ່ງ ຄື ຫົວໜ້າສຳນັກງານສົ່ງເສີມ ຈນກ, ຮອງອຳນວຍການ ທສວ ຖືກແຕ່ງຕັ້ງ ຫຼື ປົດຕຳແໜ່ງ ໂດຍລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ຕາມການຮັບຮອງຂອງສະພາບໍລິຫານ ທສວ.

ຫົວໜ້າພະແນກ ແລະ ຮອງຫົວໜ້າພະແນກ ຖືກແຕ່ງຕັ້ງ ຫຼື ປົດຕຳແໜ່ງ ໂດຍລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ຕາມການສະເໜີຂອງຜູ້ອຳນວຍການ ທສວ.

**ມາດຕາ 33 ສິດ ແລະ ໜ້າທີ່ຂອງຜູ້ອຳນວຍການ ທສວ**

ຜູ້ອຳນວຍການ ທສວ ມີ ສິດ ແລະ ໜ້າທີ່ ຕົ້ນຕໍ ດັ່ງນີ້:

1. ຮັບຜິດຊອບຕໍ່ສະພາບໍລິຫານ ທສວ ໃນການຄຸ້ມຄອງວຽກງານປະຈຳວັນ ຂອງ ທສວ ຕາມນະໂຍບາຍ, ມະຕິຂອງສະພາບໍລິຫານ ທສວ ແລະ ສອດຄ່ອງກັບກົດໝາຍ;
2. ສ້າງບົດລາຍງານ ແລະ ແຜນການເຄື່ອນໄຫວປະຈຳປີ, ແຜນລາຍຮັບ ແລະ ລາຍຈ່າຍປະຈຳປີ ເພື່ອສະເໜີສະພາບໍລິຫານ ທສວ ພິຈາລະນາຮັບຮອງ;
3. ຄົ້ນຄວ້າອັດຕາດອກເບ້ຍເງິນກູ້ ຜ່ານທະນາຄານທຸລະກິດ, ສະຖາບັນການເງິນອື່ນ;
4. ຄົ້ນຄວ້າເງື່ອນໄຂຂອງທະນາຄານທຸລະກິດ ຫຼື ສະຖາບັນການເງິນອື່ນ ທີ່ຈະໄດ້ຮັບທຶນ ຂອງ ທສວ;
5. ຄົ້ນຄວ້າ ແລະ ສ້າງລະບຽບການ ສະໜອງທຶນໃຫ້ໂຄງການວິຊາການ;
6. ຄົ້ນຄວ້າ ແລະ ສ້າງລະບຽບການບໍລິຫານ ທສວ ເພື່ອນຳສະເໜີສະພາບໍລິຫານ ທສວ ພິຈາລະນາຮັບຮອງ;
7. ຂົນຂວາຍ, ລະດົມທຶນຈາກແຫຼ່ງຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ;
8. ພິຈາລະນາອະນຸມັດ ການນຳໃຊ້ທຶນ ຂອງ ທສວ ຕາມເປົ້າໝາຍ ແລະ ຂອບເຂດສິດ ທີ່ສະພາບໍລິຫານ ທສວ ກຳນົດໃຫ້;
9. ສະເໜີແຕ່ງຕັ້ງ ຫຼື ປົດຕຳແໜ່ງ ຮອງຜູ້ອຳນວຍການ ທສວ, ຫົວໜ້າ ແລະ ຮອງຫົວໜ້າພະແນກ ຂອງ ທສວ;
10. ຮັບສະໝັກ, ຄັດເລືອກ ແລະ ບັນຈຸສັບຊ້ອນບຸກຄະລາກອນ ເຂົ້າເຮັດວຽກໃນ ທສວ ຕາມຕຳແໜ່ງງານ ແລະ ຈຳນວນ ທີ່ໄດ້ຮັບອະນຸມັດຈາກສະພາບໍລິຫານ ທສວ;
11. ຄັດເລືອກ ແລະ ວ່າຈ້າງຜູ້ຊ່ຽວຊານ ຫຼື ທີ່ປຶກສາ ເພື່ອປະຕິບັດໜ້າທີ່ສະເພາະໃດໜຶ່ງ ຕາມຄວາມຈຳເປັນ ແລະ ການເຫັນດີຂອງສະພາບໍລິຫານ ທສວ;
12. ພົວພັນ, ຮ່ວມມືກັບອົງການຈັດຕັ້ງ ແລະ ຄູ່ຮ່ວມພັດທະນາກ່ຽວກັບວຽກງານ ທສວ;
13. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານ ຂອງ ທສວ ປະຈຳ ສາມເດືອນ, ຫົກເດືອນ, ເກົ້າເດືອນ ແລະ ປະຈຳປີ ໃຫ້ສະພາບໍລິຫານ ທສວ;
14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງສະພາບໍລິຫານ ທສວ.

## ໝວດທີ 7
## ການກວດສອບ, ການກວດກາ ແລະ ລາຍງານ

**ມາດຕາ 34 ການກວດສອບ**

ທສວ ຕ້ອງໄດ້ຮັບການກວດສອບທຸກປີ ໂດຍອົງການກວດສອບແຫ່ງລັດ ຫຼື ຜູ້ກວດສອບອິດສະລະ. ໃນກໍລະນີທາກພົບເຫັນວ່າ ມີການກະທຳຜິດ, ຜູ້ກະທຳຜິດ ຕ້ອງຖືກດຳເນີນຄະດີ ຕາມກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 35 ການກວດກາ ທສວ**

ການກວດກາ ແມ່ນ ການປະເມີນຜົນການເຄື່ອນໄຫວຂອງ ທສວ ໂດຍຄະນະກຳມະການກວດກາພາຍໃນ, ສະພາບໍລິຫານ ທສວ ແລະ ອົງການກວດກາ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ເພື່ອຮັບປະກັນຄວາມໂປ່ງໃສ, ມີປະສິດທິພາບ, ປະສິດທິຜົນ, ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 36 ເນື້ອໃນການກວດກາ**

ການກວດກາ ທສວ ມີ ເນື້ອໃນຕົ້ນຕໍ ດັ່ງນີ້:

1. ການຈັດຕັ້ງປະຕິບັດແຜນການ, ແຜນງານ, ໂຄງການ ກ່ຽວກັບ ທສວ;
2. ແຫຼ່ງລາຍຮັບຂອງ ທສວ, ແຜນລາຍຈ່າຍການຈັດຕັ້ງປະຕິບັດ ແລະ ງົບປະມານຄຸ້ມຄອງບໍລິຫານ ທສວ;
3. ການຈັດຕັ້ງປະຕິບັດວຽກງານບຸກຄະລາກອນ ຂອງ ທສວ ແລະ ການປະຕິບັດນະໂຍບາຍຕ່າງໆ.

**ມາດຕາ 37 ຮູບການການກວດກາ**

ການກວດກາ ທສວ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ ຊຶ່ງແມ່ນ ການກວດກາທີ່ດຳເນີນໄປຕາມແຜນການ ຢ່າງເປັນປະຈຳ ແລະ ມີກຳນົດເວລາທີ່ແນ່ນອນ;
2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ;
3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາໂດຍຮີບດ່ວນ ທີ່ບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ.

ໃນການດຳເນີນການກວດກາ ຕ້ອງປະຕິບັດຕາມກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ.

**ມາດຕາ 38 ການລາຍງານ**

ທສວ ຕ້ອງສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານຂອງຕົນ ສາມເດືອນ, ຫົກເດືອນ, ເກົ້າເດືອນ ແລະ ໜຶ່ງປີ ໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງການເງິນ ແລະ ອົງການກວດສອບແຫ່ງລັດ ເພື່ອຕິດຕາມ ກວດກາ.

## ໝວດທີ 8
## ຄວາມຮັບຜິດຊອບຂອງກະຊວງ ແລະ ອົງການທີ່ກ່ຽວຂ້ອງ

**ມາດຕາ 39 ຄວາມຮັບຜິດຊອບຂອງກະຊວງອຸດສາຫະກຳ ແລະ ການຄ້າ**

ໃນການຄຸ້ມຄອງ ທສວ ກະຊວງອຸດສາຫະກຳ ແລະ ການຄ້າ ມີຄວາມຮັບຜິດຊອບ ດັ່ງນີ້:

1. ຄົ້ນຄວ້າສ້າງ ນະໂຍບາຍ, ນິຕິກຳ ແລະ ມາດຕະການກ່ຽວກັບການຄຸ້ມຄອງ ທສວ ເພື່ອສະເໜີລັດຖະບານ ພິຈາລະນາ;
2. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ນິຕິກຳ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ ທສວ ໃຫ້ພາກສ່ວນທີ່ກ່ຽວຂ້ອງ ທັງພາກລັດ ແລະ ພາກທຸລະກິດ ຢ່າງທົ່ວເຖິງ;

3. ກຳນົດຂະແໜງບູລິມະສິດ ໃນການສົ່ງເສີມແຕ່ລະໄລຍະ ໂດຍປະສານສົມທົບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ;

4. ສະເໜີແຜນການເຄື່ອນໄຫວ ແລະ ແຜນງົບປະມານປະຈຳປີ ຂອງ ທສວ ທີ່ສະພາບໍລິຫານ ທສວ ໄດ້ອະນຸມັດແລ້ວນັ້ນ ໃຫ້ລັດຖະບານ ພິຈາລະນາເອົາເຂົ້າແຜນງົບປະມານປະຈຳປີ;

5. ສະເໜີລັດຖະບານ ພິຈາລະນາການສະໜອງງົບປະມານ, ການກູ້ຢືມ ແລະ ການຊ່ວຍເຫຼືອລ້າ ຈາກຕ່າງປະເທດ ເພື່ອເພີ່ມທຶນ ໃຫ້ ທສວ ຕາມຄວາມຕ້ອງການ ໃນແຕ່ລະໄລຍະ;

6. ພິຈາລະນາ ວົງເງິນການສະໜອງສິນເຊື່ອ ໃຫ້ ຈນກ ທີ່ລົງທຶນໃນຂົງເຂດບູລິມະສິດ ທີ່ເກີນ ເຈັດສິບສ່ວນຮ້ອຍ ແຕ່ບໍ່ເກີນ ຮ້ອຍສ່ວນຮ້ອຍ ຂອງມູນຄ່າຊັບສິນທັງໝົດຂອງວິສາຫະກິດທີ່ກູ້ຢືມ;

7. ຄົ້ນຄວ້າ ແລະ ສະເໜີ ນາຍົກລັດຖະມົນຕີ ພິຈາລະນາ ແຕ່ງຕັ້ງ ຫຼື ປົດຕຳແໜ່ງ ສະມາຊິກສະພາບໍລິຫານ ທສວ;

8. ແຕ່ງຕັ້ງ ຫຼື ປົດຕຳແໜ່ງ ຮອງຜູ້ອຳນວຍການ ທສວ, ຫົວໜ້າພະແນກ ແລະ ຮອງຫົວໜ້າພະແນກ;

9. ໃຫ້ຄຳປຶກສາ, ຝຶກອົບຮົມ ແລະ ຊ່ວຍເຫຼືອດ້ານວິຊາການ ໃຫ້ແກ່ ຈນກ;

10. ປະສານສົມທົບກັບ ກະຊວງການເງິນ, ທະນາຄານ ແຫ່ງ ສປປ ລາວ ເພື່ອໃຫ້ທິດຊີ້ນຳ ກ່ຽວກັບການເຄື່ອນໄຫວ ທສວ;

11. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງ ທສວ ໃຫ້ລັດຖະບານ ຢ່າງເປັນປົກກະຕິ;

12. ມີຄວາມຮັບຜິດຊອບອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 40 ຄວາມຮັບຜິດຊອບຂອງກະຊວງການເງິນ**

ໃນການຄຸ້ມຄອງ ທສວ ກະຊວງການເງິນ ມີ ຄວາມຮັບຜິດຊອບ ດັ່ງນີ້:

1. ຈັດສັນງົບປະມານ ໃຫ້ ທສວ ແຕ່ລະໄລຍະ ຕາມການຕົກລົງຂອງລັດຖະບານ;

2. ອຳນວຍຄວາມສະດວກ ໃຫ້ ທສວ ໃນການເຂົ້າເຖິງແຫຼ່ງທຶນຈາກແຫຼ່ງຕ່າງໆ ທີ່ເປັນໄປໄດ້;

3. ຕິດຕາມ ແລະ ໃຫ້ການແນະນຳ ກ່ຽວກັບລະບຽບການນຳໃຊ້ເງິນ ຂອງ ທສວ;

4. ຄົ້ນຄວ້າລະບຽບການທີ່ຈຳເປັນ ເພື່ອອຳນວຍຄວາມສະດວກ ໃຫ້ການເຄື່ອນໄຫວວຽກງານຂອງ ທສວ;

5. ລະດົມທຶນຈາກພາຍໃນ ແລະ ຕ່າງປະເທດ ເພື່ອເພີ່ມທຶນ ໃຫ້ ທສວ ຕາມຄວາມເໝາະສົມ ໃນແຕ່ລະໄລຍະ;

6. ເຈລະຈາ ແລະ ເຊັນສັນຍາກັບອົງການຈັດຕັ້ງສາກົນ, ສະຖາບັນການເງິນ ແລະ ຕ່າງປະເທດ ກ່ຽວກັບການຮ່ວມມືດ້ານການເງິນ ເພື່ອສະໜອງທຶນ ໃຫ້ ທສວ;

7. ອຳນວຍຄວາມສະດວກ ໃນການຊຳລະຕົ້ນທຶນ, ດອກເບ້ຍເງິນກູ້ ແລະ ລາຍຈ່າຍອື່ນ ໃຫ້ສາມາດຊຳລະຖືກຕ້ອງຕາມກຳນົດເວລາ ທີ່ໄດ້ກຳນົດໄວ້ໃນສັນຍາກູ້ຢືມ;

8. ມີຄວາມຮັບຜິດຊອບອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 41 ຄວາມຮັບຜິດຊອບຂອງທະນາຄານ ແຫ່ງ ສປປ ລາວ**

ໃນການຄຸ້ມຄອງ ທສວ ທະນາຄານ ແຫ່ງ ສປປ ລາວ ມີ ຄວາມຮັບຜິດຊອບ ດັ່ງນີ້:

1. ຄົ້ນຄວ້າ ລະບຽບການ ແລະ ເງື່ອນໄຂ ທີ່ຕິດພັນກັບພາລະບົດບາດຂອງທະນາຄານ ແຫ່ງ ສປປ ລາວ ໃນການສົ່ງເສີມ ຈນກ ເຂົ້າເຖິງແຫຼ່ງທຶນໃຫ້ເພີ່ມຂຶ້ນ;

2. ໃຫ້ການປຶກສາ ແລະ ປະກອບຄຳເຫັນແກ່ ທສວ ກ່ຽວກັບການກຳນົດ ນະໂຍບາຍ, ກົນໄກ ແລະ ລະບຽບການສິນເຊື່ອ ເພື່ອສົ່ງເສີມ ຈບກ ຂອງ ທສວ;

3. ຮັບໂອນເງິນຈາກສະຖາບັນການເງິນສາກົນ ແລະ ຕ່າງປະເທດ ເພື່ອເປັນບ່ອນຄ່ຽນຖ່າຍເງິນ ໃຫ້ ທສວ;

4. ມີຄວາມຮັບຜິດຊອບອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 42 ຄວາມຮັບຜິດຊອບຂອງກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ**

ບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ມີຄວາມຮັບຜິດຊອບ ໃນການອຳນວຍຄວາມສະດວກ ໃຫ້ການຈັດຕັ້ງເຄື່ອນໄຫວ, ການລະດົມທຶນ, ການສະໜອງຂໍ້ມູນ ແລະ ໃຫ້ການຮ່ວມມືດ້ານຕ່າງໆ ຕາມການສະເໜີ ຂອງ ທສວ.

ຂະແໜງການ ທີ່ຮັບຜິດຊອບຂະແໜງການບໍລິມະສິດ ມີໜ້າທີ່ໃນການສ້າງຄວາມເຂັ້ມແຂງດ້ານວິຊາການ ແລະ ຄວາມອາດສາມາດໃນການແຂ່ງຂັນ ໃຫ້ ຈບກ ໃນຂະແໜງການ ທີ່ຢູ່ພາຍໃຕ້ຄວາມຮັບຜິດ ຊອບຂອງຕົນ.

**ມາດຕາ 43 ຄວາມຮັບຜິດຊອບຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນອື່ນ**

ທະນາຄານທຸລະກິດ ແລະ ສະຖາບັນການເງິນອື່ນ ມີ ຄວາມຮັບຜິດຊອບ ດັ່ງນີ້:

1. ພິຈາລະນາອະນຸມັດປ່ອຍກູ້ ໃຫ້ ຈບກ ຕ້ອງສອດຄ່ອງຕາມເງື່ອນໄຂຂອງ ທສວ ແລະ ຜູ້ໃຫ້ທຶນ;

2. ປະເມີນ ແລະ ອະນຸມັດປ່ອຍກູ້ ຕາມຂັ້ນຕອນຂອງທະນາຄານ ຢ່າງເຂັ້ມງວດ ແລະ ວ່ອງໄວ;

3. ຕິດຕາມ, ກວດສອບການນຳໃຊ້ທຶນ ຂອງ ຈບກ ໃຫ້ຖືກຕ້ອງສອດຄ່ອງຕາມຈຸດປະສົງ ແລະ ເປົ້າໝາຍ;

4. ຕ້ອງຮັບປະກັນ ບໍ່ໃຫ້ນຳເອົາເງິນທຶນ ທີ່ ທສວ ສະໜອງໃຫ້ ໄປຝາກຕໍ່ ແລະ ນຳໃຊ້ ເພື່ອຈຸດປະສົງອື່ນ ທີ່ນອກເໜືອຈາກການປ່ອຍກູ້ ໃຫ້ ຈບກ;

5. ຊຳລະຕົ້ນທຶນ ແລະ ດອກເບ້ຍ ໃຫ້ ທສວ ຢ່າງຖືກຕ້ອງ, ຄົບຖ້ວນ ແລະ ທັນຕາມກຳນົດເວລາທີ່ໄດ້ກຳນົດໄວ້ໃນສັນຍາກັບ ທສວ;

6. ໃຫ້ຄຳປຶກສາ, ຝຶກອົບຮົມ ເພື່ອສ້າງຄວາມເຂັ້ມແຂງ ໃຫ້ ຈບກ ທີ່ກູ້ຢືມບ້ວງທຶນຂອງ ທສວ;

7. ເຜີຍແຜ່ຂໍ້ມູນຂ່າວສານ ກ່ຽວກັບແຫຼ່ງທຶນ ຂອງ ທສວ ໃຫ້ ຈບກ ຮັບຊາບ ແລະ ຢ່າງທົ່ວເຖິງ;

8. ສະຫຼຸບ ແລະ ລາຍງານການນຳໃຊ້ເງິນທຶນ ໃຫ້ ທສວ ປະຈຳເດືອນ, ສາມເດືອນ, ຫົກເດືອນ, ເກົ້າເດືອນ ແລະ ປະຈຳປີ;

9. ມີຄວາມຮັບຜິດຊອບອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 44 ຄວາມຮັບຜິດຊອບ ຂອງ ຈບກ**

ຈບກ ມີ ຄວາມຮັບຜິດຊອບ ດັ່ງນີ້:

1. ນຳໃຊ້ເງິນກູ້ ແລະ ທຶນໂຄງການວິຊາການ ໃຫ້ຖືກຕ້ອງຕາມເປົ້າໝາຍ, ສອດຄ່ອງກັບສັນຍາ ທີ່ໄດ້ເຊັນກັບທະນາຄານ, ສະຖາບັນການເງິນອື່ນ ຫຼື ທສວ;

2. ປະຕິບັດພັນທະ ຕາມທີ່ກຳນົດໄວ້ໃນສັນຍາ ຢ່າງຄົບຖ້ວນ ແລະ ເຂັ້ມງວດ ຕາມສັນຍາທີ່ໄດ້ເຊັນກັບທະນາຄານ, ສະຖາບັນການເງິນອື່ນ ຫຼື ທສວ;

3. ສະໜອງຂໍ້ມູນ ແລະ ເອກະສານ ກ່ຽວກັບການກູ້ຢືມ, ການນຳໃຊ້ທຶນ ຂອງ ທສວ ຢ່າງຄົບຖ້ວນ, ຖືກຕ້ອງ ແລະ ເຊື່ອຖືໄດ້ ໃຫ້ທະນາຄານ ຫຼື ສະຖາບັນການເງິນອື່ນ ຕາມກຳນົດເວລາ;

4. ສະໜອງຂໍ້ມູນ ແລະ ເອກະສານ ກ່ຽວກັບການນໍາໃຊ້ທຶນໂຄງການວິຊາການ ຂອງ ທສວ ຢ່າງຄົບຖ້ວນ, ຖືກຕ້ອງ ແລະ ເຊື່ອຖືໄດ້ ໃຫ້ ທສວ ຕາມກໍານົດເວລາ;

5. ມີຄວາມຮັບຜິດຊອບອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 45 ຄວາມຮັບຜິດຊອບຂອງຜູ້ໄດ້ຮັບທຶນໂຄງການວິຊາການ**

ຜູ້ຮັບທຶນໂຄງການວິຊາການ ຕາມທີ່ໄດ້ກໍານົດໃນມາດຕາ 16 ຂອງດໍາລັດສະບັບນີ້ ມີຄວາມຮັບຜິດຊອບ ດັ່ງນີ້:

1. ນໍາໃຊ້ທຶນໂຄງການວິຊາການ ໃຫ້ຖືກຕ້ອງຕາມເປົ້າໝາຍ, ສອດຄ່ອງກັບສັນຍາທີ່ໄດ້ເຊັນກັບ ທສວ;

2. ປະຕິບັດພັນທະ ທີ່ລະບຸໃນສັນຍາ ຢ່າງຄົບຖ້ວນ ແລະ ເຂັ້ມງວດ ຕາມສັນຍາທີ່ໄດ້ເຊັນກັບ ທສວ;

3. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດໂຄງການ ແລະ ການນໍາໃຊ້ເງິນ ໃຫ້ ທສວ ຢ່າງຄົບຖ້ວນ, ຖືກຕ້ອງ ແລະ ທັນຕາມກໍານົດເວລາ;

4. ມີຄວາມຮັບຜິດຊອບອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

## ໝວດທີ 9
## ບົດບັນຍັດສຸດທ້າຍ

**ມາດຕາ 46 ເຄື່ອງໝາຍ ແລະ ຕາປະທັບ**

ທສວ ມີ ເຄື່ອງໝາຍ ແລະ ຕາປະທັບເປັນຂອງຕົນເອງ ເພື່ອຮັບໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ.

**ມາດຕາ 47 ການຈັດຕັ້ງປະຕິບັດ**

ກະຊວງອຸດສາຫະກໍາ ແລະ ການຄ້າ ເປັນເຈົ້າການສົມທົບກັບກະຊວງການເງິນ, ທະນາຄານ ແຫ່ງ ສປປ ລາວ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດດໍາລັດສະບັບນີ້.

ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ໃຫ້ການຮ່ວມມື ໃນການປະຕິບັດດໍາລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 48 ຜົນສັກສິດ**

ດໍາລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 28 ກຸມພາ 2023 ເປັນຕົ້ນໄປ.

ດໍາລັດສະບັບນີ້ ປ່ຽນແທນ ດໍາລັດວ່າດ້ວຍກອງທຶນສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ສະບັບເລກທີ 299/ລບ, ລົງວັນທີ 04 ກັນຍາ 2019.

ຕາງໜ້າລັດຖະບານ ແຫ່ງ ສປປ ລາວ
ນາຍົກລັດຖະມົນຕີ

ສອນໄຊ ສີພັນດອນ